# ສິດທິຂອງຄົນໄຂ້ທີ່ຢູ່ໃນສຖານທີ່ເບິ່ງແຍງຮັກສາ
# (HOME CARE BILL OF RIGHTS-Lao)

**ອີງຕາມກົດໝາຍແຫ່ງຣັຖມິນນີໂຊຕາ, ມາຕຣາ 144A.44 ຍົກເວັ້ນແຕ່ຂໍ້ຄວາມໃດທີ່ພິມເປັນດໍາກວ່າ ນັ້ນໝາຍເຖິງສິດທິຂອງຜູ້ບໍຣິໂພກ ເພີ່ມຕື່ມຂຶ້ນອີກ ພາຍໄຕ້ກົດໝາຍຣັຖບານກາງ. ເພື່ອໃຫ້ໃຊ້ກັບອົງກອນການແພດຊຶ່ງຖືກຢັ້ງຢືນແລ້ວ.**

**ສິດທິຕ່າງໆທີ່ກົດໝາຍທີ່ໄດ້ຣະບຸໄວ້ມີຄື.**

ບຸກຄົນທີ່ໄດ້ຮັບການຮັກສາເບິ່ງແຍງຢູ່ທີ່ບ້ານ ມີສິດທິດັ່ງຕໍ່ໄປນີ້:

1. ມີສິດໄດ້ຮັບໜັງສືແຈ້ງບອກເຖິງສິດທິກ່ອນທີ່ຈະໄດ້ຮັບການຮັກສາເບິ່ງເຍງ ຫຼືໃນລະຍະການໄປກວດປະເມີນອາການຄັ້ງແຮກກ່ອນທີ່ຈະເລີ່ມການປິ່ນປົວ, ລວມທັງການຊີ້ແຈງເຖິງສິ່ງທີ່ຕ້ອງຄວນເຮັດ ຖ້າຫາກວ່າຖືກລະເມີດສິດທິ.

2. ມີສິດໄດ້ຮັບການຮັກສາເບິ່ງແຍງແລະບໍຣິການຕາມແຜນການອັນເໝາະສົມແລະໃຫ້ຖືກຕາມມາຕການແພດຫຼື ພຍາບານປະກອບສ່ວນ ອອກຄໍາເຫັນໃນການວາງແຜນແລະປ່ຽນແປງ ພ້ອມກວດປະເມີນການຮັກສາ ເບິ່ງແຍງແລະການບໍຣິການ. **ຜູ້ໃຫ້ບໍຣິການນັ້ນຄວນຈະໄດ້ແຈ້ງໃຫ້ຜູ້ທີ່ໄດ້ຮັບການບໍຣິການນັ້ນຊາບກ່ອນລ່ວງໜ້າກ່ຽວກັບສິດທິຂອງຕົນໃນການເຂົ້າຮ່ວມການວາງແຜນການຮັກສາເບິ່ງແຍງ ຫຼື ປິ່ນປົວ.**

3. ມີສິດໄດ້ຮັບແຈ້ງໃຫ້ຮູ້ລ່ວງໜ້າກ່ອນໄດ້ຮັບການຮັກສາເບິ່ງແຍງກ່ຽວກັບການບໍຣິຫານ, ແພດຂະແນງໃດຈະກໍາກັບການຮັກສາເບິ່ງແຍງການມາຢ້ຽມຢາມຈັກເທື່ອ, ແລະວິທີທາງອື່ນໆອີກທີ່ມີໃຫ້ເລືອກ, ແລະຜົນສະທ້ອນຂອງສິ່ງທີ່ທ່ານເລືອກ, ລວມທັງ ຜົນສະທ້ອນຂອງການປະຕິເສດການບໍຣິການເຫຼົ່ານີ້.

4. ມີສິດໄດ້ຮັບແຈ້ງລ່ວງໜ້າ ຖ້າຫາກຈະມີການປ່ຽນແປງຂອງແຜນການຮັກສາເບິ່ງແຍງ ແລະປະກອບສ່ວນອອກ ຄໍາເຫັນໃນການປ່ຽນແປງໃດໆ, **ແລະແຜນການໃດໆກ່ອນທີ່ຈະມີການປ່ຽນແປງນັ້ນ**.

5. ມີສິດທີ່ຈະປະຕິເສດການບໍຣິການຫຼືການປິ່ນປົວ.

6. ມີສິດໄດ້ຮັບແຈ້ງລ່ວງໜ້າ ກ່ຽວກັບການຈໍາກັດຂອງການບໍຣິການຈາກຜູ້ໃຫ້ບໍຣິການ, ແລະເງື່ອນໄຂກ່ຽວກັບການຢຸດບໍຣິການຂອງຜູ້ໃຫ້ບໍຣິການ.

7. ມີສິດໄດ້ຮັບ**ແຈ້ງໃຫ້ຊາບກ່ອນລ່ວງໜ້າຈະເປັນໃນທາງວາຈາບອກກ່າວຫຼືເປັນໜັງສືຂຽນ**ແຈ້ງມາໃຫ້ຊາບວ່າການຮັກສາເບິ່ງແຍງຫຼືການບໍຣິການນັ້ນຈະຖືກຈ່າຍໂດຍບໍຣິສັດປະກັນພັຍເອກຊົນ ຫຼືໂຄງການຊ່ວຍເຫຼືອພຍາບານຫຼືໂຄງການສາທາຣະນະສຸກອື່ນໆ ໂດຍຣາຄາຂອງບໍຣິການທີ່ເມດິເຄບໍ່ຊ່ວຍຈ່າຍ ແລະ ຣາຄາທີ່ຄົນເຈັບອາດຈະຈ່າຍເອງ. ຜູ້ບໍຣິການນັ້ນ **ຕ້ອງໄດ້ແຈ້ງໃຫ້ຜູ້ຮັບບໍຣິການນັ້ນຊາບກ່ອນລ່ວງໜ້າກ່ອນຈະເປັນທາງວາຈາບອກກ່າວຫຼືຈະຂຽນເປັນໜັງສືແຈ້ງ**ມາໃຫ້ຜູ້ຮັບບໍຣິການນັ້ນຮູ້ເຖິງເຣື່ອງການທີ່ຈະມີການປ່ຽນແປງໃດກ່ຽວກັບ ບໍຣິການຮັກສາປິ່ນປົວຢູ່ທີ່ບ້ານ.

8. ມີສິດຮູ້ຈັກຣາຄາຄ່າບໍຣິການໂດຍກ່ຽວວ່າໃຜຈະເປັນຜູ້ຈ່າຍ.

9. ມີສິດຮູ້ຈັກວ່າໃນເຂດຄຸ້ມບ້ານນັ້ນມີການບໍລິການອື່ນໆຫຍັງແດ່ ລວມທັງການຮັກສາເບິ່ງແຍງຢູ່ບ້ານແລະຜູ້ບໍລິການອື່ນໆ, ແລະຮູ້ຈັກບ່ອນຕິດຕໍ່ກ່ຽວການບໍລິການເຫຼົ່ານີ້ເວລາຕ້ອງການ.

10. ມີສິດເລືອກເອົາຜູ້ບໍລິການຕ່າງໆໄດ້ຢ່າງອິສຣະແລະມີສິດປ່ຽນຜູ້ບໍລິການນັ້ນໄດ້ເຖິງແມ່ນວ່າໄດ້ເລີ່ມການບໍລິການນັ້ນມາແລ້ວ ກໍຕາມ ພາຍໃນຂອບເຂດຈຳກັດຂອງປະກັນພັຍໂຄງການຊ່ວຍເຫຼືອພຍາບານຫຼືໂຄງການສຸຂພາບອື່ນໆ.

11. ມີສິດຮັກສາຂໍ້ມູນສ່ວນຕົວ, ການເງິນ, ການພຍາບານຂອງຕົນໄວ້ເປັນຄວາມລັບສ່ວນຕົວ, ແລະມີສິດຖືກແຈ້ງແນະນຳກ່ຽວກັບນະໂຍບາຍແລະວິທີການດຳເນີນຂອງຜູ້ໃຫ້ບໍລິການ.

12. ມີສິດຮັບອະນຸຍາດຄົ້ນເບິ່ງຂໍ້ມູນຕ່າງໆແລະລາຍການບັນທຶກຈາກເອກກະສານຕ່າງໆ ຕາມກົດໝາຍທີ່ໄດ້ລະບຸໄວ້ໃນມາຕຣາ 144.355.

13. ມີສິດໄດ້ຮັບການບໍລິການທີ່ດີຈາກບຸກຄົນທີ່ໄດ້ຮັບການຝຶກອົບຮົບອັນເໝາະສົມແລະມີຄວາມສາມາດພຽງພໍຕໍ່ໜ້າທີ່ເຂົາເຈົ້າ.

14. ມີສິດຖືກຕ້ອນຮັບຢ່າງມີກຽດແລະນັບຖື ແລະສິ່ງຂອງຄົນເຈັບຖືກຮັກສາເບິ່ງແຍງດ້ວຍຄວາມນັບຖື.

15. ມີສິດພົ້ນຈາກການຖືກທາຣຸນຂົ່ມເຫັງທາງຮ່າງກາຍແລະ ວາຈາ.

16. ມີສິດໄດ້ຮັບປະກາດໃຫ້ຊາບລ່ວງໜ້າກ່ຽວກັບການປ່ຽນແປງໃນການບໍລິການຫຼືການປ່ຽນແປງຣາຄາຄ່າບໍລິການ.

17. ມີສິດໄດ້ຮັບການປະສານງານໃນການຍົກຍ້າຍ ໃນເມື່ອມີການທີ່ຈະປ່ຽນແປງການບໍລິການ.

18. ມີສິດຂໍຄວາມເປັນທັມກ່ຽວການປິ່ນປົວ ຫຼືການຮັກສາເບິ່ງແຍງ, ຫຼືຄວາມພາດພັ້ງ, ຫຼື ການບໍ່ໃຫ້ກຽດແລະນັບຖືແກ່ຄົນເຈັບ ຫຼື ສິ່ງຂອງຂອງຄົນເຈັບ.

19. ມີສິດຮູ້ຈັກຕິດຕໍ່ກັບບຸກຄົນທີ່ມີໜ້າທີ່ຮັບຜິດຊອບແກ້ໄຂບັນຫາແລະໃຫ້ຜູ້ບໍລິການສືບສວນ ແລະພຍາຍາມແກ້ໄຂຄຳຮ້ອງທຸກຫຼືຄຳຕຳນິຕິຕຽນ. **ຜູ້ບໍລິການນັ້ນຄວນຈະໄດ້ບັນທຶກເປັນລາຍລັກອັກສອນທຸກຢ່າງກ່ຽວກັບຄຳຕຳນິຫຼືຄຳຮ້ອງທຸກຂອງຜູ້ທີ່ໄດ້ຮັບການບໍລິການນັ້ນຕລອດທັງການບັນທຶກທຸກສິ່ງຢ່າງໄວ້ແລະທັງການບັນທຶກເຣື່ອງການແກ້ໄຂບັນຫາຂອງຜູ້ທີ່ໄດ້ຮັບການບໍລິການນັ້ນທີ່ມີບັນຫາກັບພນັກງານຜູ້ບໍລິການຜູ້ໃດຜູ້ນຶ່ງທີ່ສ້າງຄວາມບໍ່ພໍໃຈໃຫ້ແກ່ເພິ່ນ.**

20. ມີສິດຮູ້ຈັກຊື່ແລະທີ່ຢູ່ຫ້ອງການຂອງຣັຖບານແຫ່ງຣັຖ ຫຼືເຂດເມືອງເພື່ອຕິດຕໍ່ຂໍຄວາມຊ່ວຍເຫຼືອເພີ່ມຕື່ມ.

21. ມີສິດທວງເອົາສິດທັງປວງເຫຼົ່ານີ້ໂດຍຕົນເອງຫຼືໂດຍຄອບຄົວຫຼືຜູ້ປົກຄອງເມື່ອເວລາຄົນເຈັບຖືກຕັດສິນບໍ່ສາມາດຊ່ວຍຕົນເອງໄດ້ໂດຍປັສະຈາກການບາດໝາງໃດໆທັງສິ້ນ.

**ສິດທິເຫຼົ່ານີ້ໄດ້ແຕ່ງຂຶ້ນເພື່ອຜົນປະໂຍດຂອງຄົນເຈັບຜູ້ທີ່ໄດ້ຮັບການຮັກສາເບິ່ງແຍງຢູ່ບ້ານ.**

**ຖ້າຫາກທ່ານມີຄຳຕຳນິຕິຕຽນໃດໆກ່ຽວກັບອົງການ ຫຼືບຸກຄົນທີ່ບໍຣິການຮັກສາເບິ່ງແຍງຢູ່ບ້ານ, ທ່ານສາມາດຈະໂທຣສັພ,ຂຽນຈົດໝາຍ,ຫຼືຈະເຂົ້າໄປຫາດວ້ຍຕົນເອງທີ່ຫ້ອງການພະແນກຮັບຟັງຄຳຕຳນິຕິຕຽນຂອງກະຊວງສາທາຣະນະສຸກ, ຫຼື ທ່ານອາດໂທຣສັພ ຕິດຕໍ່ໄປຍັງ ຫ້ອງການຮັບຟັງຄຳຮ້ອງທຸກຂອງຜູ້ອາວຸໂສຂອງຣັຖມິນນີໂຊຕາ**

ກະຊວງສາທາຣະນະສຸກ ຣັຖມິນນີໂຊຕາ
ຫ້ອງການຮັບຟັງຄຳຮ້ອງທຸກຂອງຄົນໄຂ້
Minnesota Department of Health
Office of Health Facility Complaints
P. O. Box 64970
St. Paul, MN 55164-0970

ເລກໂທຣສັບ:

1-800-369-7994 ຫຼື
(651) 215-8702

ຫ້ອງການຮັບຟັງຄຳຮ້ອງທຸກຂອງຜູ້ອາວຸໂສຂອງຣັຖມິນນີໂຊຕາ
Ombudsman For Older Minnesotans
Metro Square Building
121 East Seventh Place
Suite 400
St. Paul, Minnesota 55101

ເລກໂທຣສັບ:

(651) 296-0382 ຫຼື
1-800-657-3591

**ສຳຣັບລາຍລະອຽດເພີ່ມເຕີມ ກ່ຽວກັບເອກກະສານທີ່ແປນີ້, ກະຣຸນາ ຕິດຕໍ່ໄດ້ທີ່ ກະຊວງສາທາຣະນະສຸກ ຣັຖມິນນີໂຊຕາ**
**Minnesota Department of Heath (651) 215-8700**

==========================================================================

ຊື່ຂອງຜູ້ທີ່ບໍຣິການ:______________________________________________________________

ທີ່ຢູ່:__________________________________________________________________________

ຊື່/ຕຳແໜ່ງຂອງບຸກຄົນທີ່ຖືກກ່າວຫາ:_________________________________________________

______________________________________________________________________________

(ລາຍເຊັນຂອງຄົນເຈັບ ຫຼື ຕົວແທນຮັບຜິດຊອບ) (ວັນທີ)